ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ຄັ້ງທີ 8 ສະໄໝທີ IV



ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ຄັ້ງທີ 8 ສະໄໝທີ IV ຂອງຕົນຂຶ້ນ ຢ່າງເປັນທາງການ ໃນວັນທີ 12 ເມສາ 2023 ທີ່ຫ້ອງປະຊຸມຂອງ ທຫລ, ພາຍໃຕ້ການເປັນປະທານຂອງ **ສະຫາຍ ບຸນເຫຼືອ ສິນໄຊວໍຣະວົງ** ເລຂາຄະນະບໍລິຫານງານພັກ ທຫລ, ເຂົ້າຮ່ວມມີບັນດາສະຫາຍ ຄະນະບໍລິຫານງານພັກ ທຫລ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກຮາກຖານ, ບັນດາອົງການຈັດຕັ້ງມະຫາຊົນ, ຫົວໜ້າສາຂາ ທຫລ ປະຈຳພາກ ແລະ ພະນັກງານຫຼັກແຫຼ່ງນຳພາທີ່ກ່ຽວຂ້ອງ ເຂົ້າຮ່ວມທັງໝົດ 40 ສະຫາຍ.




ກອງປະຊຸມຄັ້ງນີ້ ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ເພາະໄດ້ພ້ອມກັນຄົ້ນຄວ້າຕີລາຄາການຊີ້ນຳ-ນຳພາວຽກງານຮອບດ້ານຂອງຕົນ ໃນ 1 ໄຕມາດຜ່ານມາ ແລະ ສືບຕໍ່ກຳນົດທິດທາງແຜນການຈຸດສຸມ ອີກ 1 ໄຕມາດຕໍ່ໜ້າ ຕິດພັນກັບການກະກຽມດຳເນີນກອງປະຊຸມກາງສະໄໝ ຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ IV ໃນຕໍ່ໜ້າ.

ໃນໂອກາດດຽວກັນ, ສະຫາຍ ປະທານກອງປະຊຸມ ໄດ້ມີຄວາມເຫັນເນັ້ນໜັກບາງບັນຫາຕໍ່ກອງປະຊຸມ ຊຶ່ງໄດ້ຮຽກຮ້ອງໃຫ້ບັນດາສະຫາຍທີ່ເຂົ້າຮ່ວມກອງປະຊຸມທັງຫຼາຍ ຈົ່ງເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນໃນການຄົ້ນຄວ້າ ແລະ ປະກອບຄວາມເຫັນຕໍ່ເອກະສານກ່ຽວຂ້ອງຢ່າງເລິກເຊິ່ງ ເພື່ອຈະສືບຕໍ່ຜັນຂະຫຍາຍເຂົ້າສູ່ພາກປະຕິບັດ ໃຫ້ເກີດໝາກຜົນຕົວຈິງໃນແຕ່ລະດ້ານ ແລະ ມີປະສິດທິຜົນສູງ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຢູ່ຂະແໜງທະນາຄານ ມີບາດກ້າວໃໝ່ທີ່ຫັນປ່ຽນຍິ່ງຂຶ້ນ.

ກອງປະຊຸມໄດ້ໃຊ້ເວລາເຄິ່ງວັນ ແລະ ປິດລົງດ້ວຍໝາກຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.



ຂ່າວໂດຍ: ກົມຈັດຕັ້ງແລະພະນັກງານ

ຮູບໂດຍ: ສຸລິຍາ ໝື່ນວິເສດ

**ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ**